## ມິຊຊາອາທິດທີ 3 ກຳມົດທຳມະດາ ປີ A

## ວັນທີ 26 ມັງກອນ 2020



**ພຣະວໍລະສານໂດຍນັກບຸນມັດເທວ 4, 12-23**

ເມື່ອຊົງຊາບວ່າທ່ານຢວງຖືກຈັບ, ພຣະເຢຊູເຈົ້າຈຶ່ງກັບສູ່ແຂວງກາລີເລ. ແລະພຣະອົງໄດ້ຈາກເມືອງນາຊາແລັດມາອາໄສຢູ່ເມືອງກາຟານາອຸມແຄມຝັ່ງທະເລທີ່ຊາຍແດນຊາບູລອນແລະແນບທາລີ. ດັ່ງນີ້ເພື່ອໃຫ້ສຳເລັດຕາມຄຳທຳນາຍຊຶ່ງປະພາສົກອີຊາຢາໄດ້ກ່າວໄວ້ວ່າ: ດິນແດນຊາບູລອນ, ດິນແດນແນບທາລີແຄມຝັ່ງທະເລຍໍແດນຟາກນັ້ນ « ກາລີເລແຫ່ງຊາວຕ່າງດ້າວ »! ລາດສະດອນທີ່ຢູ່ໃນຄວາມມືດໄດ້ເຫັນແສງສະວ່າງແຈ້ງອັນຍິ່ງໃຫຍ່. ແສງສະວ່າງໄດ້ຮຸ່ງແຈ້ງຂຶ້ນເໜືອພວກທີ່ຢູ່ໃນຮົ່ມເງົາແຫ່ງຄວາມຕາຍ. ນັບແຕ່ເວລານັ້ນເປັນຕົ້ນມາພຣະເຢຊູເຈົ້າໄດ້ເລີ່ມປະກາດເທດສອນວ່າ: « ຈົ່ງເປັນທຸກກັບໃຈ ດ້ວຍວ່າພຣະລາໄຊສະຫວັນໃກ້ເຂົ້າມາແລ້ວ ».

ໃນເວລານັ້ນ, ພຣະເຢຊູເຈົ້າຊົງເດີນລຽບຝັ່ງທະເລກາລີເລ ພຣະອົງຊົງຫລຽວເຫັນສອງອ້າຍນ້ອງຄື: ຊີມອນ, ຜູ້ຊຶ່ງມີອີກຊື່ໜຶ່ງວ່າເປໂຕ ແລະອັນເດຣຜູ້ນ້ອງຊາຍກຳລັງຕຶກແຫໃນທະເລ. ຍ້ອນວ່າພວກເຂົາເປັນຊາວປະມົງ. ພຣະອົງຊົງກ່າວແກ່ພວກເຂົາວ່າ: « ຈົ່ງຕິດຕາມເຮົາມາ ». ເຮົາຈະເຮັດໃຫ້ພວກເຈົ້າເປັນຊາວປະມົງຈັບຄົນ. ທັນທີ, ເຂົາທັງສອງກໍປະແຫແລະຕິດຕາມພຣະອົງໄປ. ເມື່ອສະເດັດໄປໄກໜ້ອຍໜຶ່ງ, ພຣະອົງຊົງພົບອ້າຍນ້ອງອີກສອງຄົນຄື: ຢາໂກເບ ບຸດຂອງເຊເບເດ ແລະຢວງຜູ້ນ້ອງຊາຍ ກຳລັງຜູງມອງຢູ່ໃນເຮືອພ້ອມກັບເຊເບເດຜູ້ເປັນບິດາ. ພຣະອົງຊົງຮຽກພວກເຂົາ. ທັນທີ, ພວກເຂົາກໍປະເຮືອພ້ອມທັງບິດາ ແລະຕິດຕາມພຣະອົງໄປ.

ພຣະເຢຊູເຈົ້າຊົງເດີນໄປທົ່ວແຂວງກາລີເລ ພ້ອມເທດສອນຕາມໂຮງທຳຕ່າງໆ, ປະກາດຂ່າວປະເສີດແຫ່ງອານາຈັກ ແລະປິ່ນປົວປະຊາຊົນໃຫ້ດີພະຍາດ ແລະການເປັ້ຍລ່ອຍທຸກຊະນິດ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 4, 12-23**

ເມື່ອພວກເຮົາຟັງວາຈາພຣະເຈົ້າວັນນີ້ຈະເຫັນວ່າວຽກງານການປະກາດພຣະລາໄຊພຣະເຈົ້າແລະການເປັນທຸກກັບໃຈເປັນສິ່ງສໍາຄັນ, ຮີບດ່ວນແລະຕໍ່ເນື່ອງ. ສິ່ງນີ້ສະແດງອອກຢູ່ບ່ອນໃດ? ສະແດງອອກຢູ່ບ່ອນວ່າ ເມື່ອນັກບຸນຢວງບັບຕິສຕາຖືກຈັບໃສ່ຄຸກໃນສະໄໝຂອງກະສັດເຮຣັອດ. ຍ້ອນນັກບຸນຢວງບັບຕິສຕາບໍ່ອະນຸຍາດໃຫ້ກະສັດເຮຣັອດເອົານາງເຮໂຣດີອັດຜູ້ເປັນພັນລະຍາຂອງນ້ອງຊາຍມາເປັນພັນລະຍາຂອງຕົນ.

ເມື່ອພຣະເຢຊູຊາບວ່າຢວງບັບຕິສຕາຖືກຈັບ ພຣະອົງກໍປາກົດຕົວເພື່ອສືບຕໍ່ວຽກງານການປະກາດພຣະລາໄຊພຣະເຈົ້າ. ພຣະເຢຊູເຈົ້າໄດ້ເລີ່ມປະກາດຂ່າວດີນີ້ໃນດິນແດນຂອງຊາບູລອນແລະແນບທາລີອັນເປັນດິນແດນຂອງຄົນຕ່າງສາດສະໜາ. ຍ້ອນວ່າພຣະລາໄຊພຣະເຈົ້າບໍ່ໄດ້ຈໍາກັດແຕ່ໃນກຸ່ມຄົນຢິວຫລືເຂດໃດເຂດໜຶ່ງເທົ່ານັ້ນ ແຕ່ພຣະລາໄຊພຣະເຈົ້າເປັນຂອງທຸກຄົນທຸກຊາດທຸກພາສາ. ດັ່ງໃນຕອນທ້າຍພຣະວໍລະສານຂອງນັກບຸນມັດເທວ ເມື່ອພຣະເຢຊູເຈົ້າກັບເປັນຄືນມາຈາກພວກຜູ້ຕາຍ, ພຣະອົງໄດ້ສັ່ງບອກພວກອັກຄະສາວົກວ່າ: *« ຈົ່ງໄປທົ່ວໂລກທໍາໃຫ້ທຸກຊາດທຸກພາສາມາເປັນລູກສິດຂອງເຮົາ. ຈົ່ງລ້າງບາບໃຫ້ພວກເຂົາເດຊະພຣະນາມພຣະບິດາແລະພຣະບຸດແລະພຣະຈິດ. ແລະສອນໃຫ້ພວກເຂົາຖືຕາມພຣະບັນຍັດທັງມວນຂອງເຮົາ »* (ມທ 28, 19-20).

ຍ້ອນການປະກາດພຣະລາໄຊພຣະເຈົ້າເປັນເລື່ອງສໍາຄັນ, ຮີບດ່ວນແລະຕໍ່ເນື່ອງ. ດັ່ງນັ້ນໃນຕອນຕົ້ນການເທດສອນຂອງພຣະເຢຊູເຈົ້າ ພຣະອົງໄດ້ຮຽກເອົາລູກສິດສີ່ຄົນທໍາອິດຄື: ຊີມອນຜູ້ມີຊື່ວ່າເປໂຕ, ອັນເດຣ, ຢາໂກເບແລະຢວງ. ເພື່ອໃຫ້ພວກເຂົາໄດ້ເປັນຜູ້ປະສານງານກັບພຣະອົງໃນການປະກາດພຣະລາໄຊພຣະເຈົ້າໃຫ້ແກ່ທຸກຄົນ.

ສິ່ງທີ່ເປັນຕາງຶດໃນທີ່ນີ້ກໍຄື ພວກລູກສິດຂອງພຣະເຢຊູເຈົ້າລ້ວນແຕ່ມີອາຊີບການງານແລະຢູ່ນໍາຄອບຄົວພໍ່ແມ່ໃນຖິ່ນຖານຂອງຕົນ. ແຕ່ເມື່ອພວກເຂົາໄດ້ພົບພຣະເຢຊູເຈົ້າແລະຟັງສຽງຮຽກເອີ້ນຂອງພຣະອົງ, ທັນໃດນັ້ນພວກເຂົາກໍໄດ້ປະທຸກສິ່ງຢ່າງແມ່ນແຕ່ພໍ່ແມ່ຂອງຕົນ ເພື່ອຕິດຕາມພຣະເຢຊູເຈົ້າໄປ. ສິ່ງນີ້ຢາກສອນພວກເຮົາຫຍັງ? ພວກເຮົາຜູ້ເປັນລູກສິດຂອງພຣະເຢຊູເຈົ້າຜ່ານທາງສິນລ້າງບາບ. ພວກເຮົາຜູ້ໄດ້ພົບພຣະເຢຊູເຈົ້າໃນວາຈາຂອງພຣະອົງແລະເປັນຕົ້ນໃນພຣະກາຍແລະພຣະໂລຫິດຂອງພຣະອົງຊຶ່ງພວກເຮົາຮັບເຂົ້າມາໃນຈິດໃຈຂອງພວກເຮົາ. ພວກເຮົາໄດ້ຟັງສຽງຮຽກເອີ້ນຂອງພຣະອົງບໍ? ພວກເຮົາໄດ້ເປີດໃຈໃຫ້ພຣະອົງບໍ? ພວກເຮົາພ້ອມແລ້ວບໍທີ່ຈະສະຫລະທຸກສິ່ງຢ່າງເພື່ອຕິດຕາມພຣະເຢຊູເຈົ້າໄປ? ຫລືພວກເຮົາຍັງຕິດພັນນໍາອາຊີບການງານ, ຄວາມມ່ວນຊື່ນຝ່າຍໂລກ, ຄວາມຮັ່ງມີສີສຸກແລະພວກເຮົາໄດ້ປະຕິເສດພຣະເຢຊູເຈົ້າ?

ຂໍໃຫ້ວາຈາພຣະເຈົ້າວັນນີ້ທໍາໃຫ້ພວກເຮົາເຂົ້າໃຈວ່າ ສິ່ງສໍາຄັນແລະຈໍາເປັນທີ່ສຸດສໍາລັບຊີວິດຂອງພວກເຮົາຜູ້ເປັນລູກສິດພຣະເຢຊູເຈົ້າຄືພຣະລາໄຊສະຫວັນນັ້ນເອງ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ